# ບົດຂ່າວ
## ພິທີຖະແຫລງຂ່າວກ່ຽວກັບການນຳໃຊ້ລະບົບຊຳລະ One pay ຜ່ານ QR Code
## ໃນວັນທີ 30/11/2017.




ໃນວັນທີ 30/11/2017, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດພິທີຖະແຫລງຂ່າວກ່ຽວກັບການເປີດນຳໃຊ້ລະບົບຊຳລະແບບທັນສະໄໝດ້ວຍ QR Code ພາຍໃຕ້ຊື່ One pay ຂຶ້ນຢູ່ທີ່ສຳນັກງານໃຫຍ່ ທຄຕລ ໂດຍ ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍໃຫຍ່ ທຄຕລ ໃຫ້ກຽດຂຶ້ນຖະແຫລງຂ່າວຕໍ່ສື່ມວນຊົນຈາກຫລາຍພາກສ່ວນ

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ແຈ້ງໃຫ້ຊາບວ່າລະບົບຊຳລະດັ່ງກ່າວ ທຄຕລ ໄດ້ພັດທະນາເພື່ອຕອບສະໜອງນະໂຍບາຍຂອງພາກລັດໃນການຫລຸດຜ່ອນການນຳໃຊ້ເງິນສົດໃນສັງຄົມ, ລະບົບມີຄວາມທັນສະໄໝປອດໄພ, ຊົມໃຊ້ງ່າຍ ສ້າງຄວາມສະດວກໃຫ້ແກ້ຜູ້ຊື້ ແລະ ຜູ້ຂາຍໃນການຊຳລະສິນຄ້າ, ບວກກັບແນວໂນ້ມຈາກພາກພື້ນ ແລະ ສາກົນ ທີ່ການຊຳລະໃນຮູບແບບດັ່ງກ່າວກຳລັງໄດ້ຮັບຄວາມນິຍົມ. ສະນັ້ນ, ທຄຕລ ຈຶ່ງໄດ້ເລັ່ງພັດທະນາລະບົບນີ້ ເຊິ່ງປະຈຸບັນກໍ່ມີຄວາມພ້ອມເພື່ອໃຫ້ບໍລິການໃນສັງຄົມລາວ.

ຫລັງຈາກທີ່ ທຄຕລ ໄດ້ມີການເປີດນຳໃຊ້ຜະລິດຕະພັນດັ່ງກ່າວ ເຫັນວ່າມີການຕອບຮັບທີ່ດີຈາກສັງຄົມ ເຊິ່ງສະແດງອອກໄດ້ຈາກ ມີລູກຄ້າໄດ້ຊົມໃຊ້ເປັນຈຳນວນຫລາຍ ແລະ ມີຫລາຍຮ້ານຄ້າກໍ່ໄດ້ຕິດຕໍ່ເຂົ້າມາເພື່ອໃຫ້ ທຄຕລ ໄປຕິດຕັ້ງລະບົບໃຫ້ ປະຈຸບັນມີຮ້ານຄ້າທີ່ຕິດຕັ້ງລະບົບແລ້ວປະມານ 50 ຈຸດ ແລະ ຍັງມີຮ້ານຄ້າທີ່ກຳລັງຈະໄດ້ຮັບການຕິດຕັ້ງອີກຫລາຍກວ່າ 100 ຈຸດໃນນະຄອນຫລວງ ແລະ ໃນໄວໆນີ້ ທຄຕລ ກໍຈະສືບຕໍ່ຂະຫຍາຍຜະລິດຕະພັນດັ່ງກ່າວໃຫ້ກວ້າງຂວາງອອກຕື່ມໃນຂອບເຂດທົ່ວປະເທດ.




ພາຍຫລັງພິທີຖະແຫລງຂ່າວ, ທຄຕລ ກໍ່ໄດ້ນໍາພາສື່ມວນຊົນ ໄປຢ້ຽມຊົມ ແລະ ທົດລອງຊໍາລະຕົວຈິງນໍາຮ້ານຄ້າທີ່ໄດ້ຕິດຕັ້ງລະບົບຊໍາລະແບບທັນສະໄໝ One pay ແລ້ວ, ຊຶ່ງສາມາດເຫັນໄດ້ເຖິງຄວາມສະດວກສະບາຍຂອງລະບົບດັ່ງກ່າວຢ່າງແທ້ຈິງ.